


## ຜົນຜະລິດ

ເຂົ້ານົກສາມາດໃຫ້ຜົນຜະລິດ ສູງກ່ວາແນວພັນເຂົ້າຂອງຊາວກະສິກອນ ເຖິງ 7-26% ຫຼື 147-412 ກລ/ຮຕ. ໃນສະພາບຂອງດິນທີ່ແຕກຕ່າງກັນ ແຕ່ໄດ້ຫຼາຍກ່ວາໝູ່ແມ່ນໃນໄຮ່ທີ່ປະເປັນປ່າເລົ່າ 2-3 ປີ (412 ກລ/ຮຕ) ຮູບທີ່ 1. ສຳລັບການນຳໃຊ້ຝຸ່ນໃນໄຮ່ເຂົ້າແມ່ນບໍ່ແນະນຳໃສ່ ເພາະວ່າການຕອບສະໜອງຕໍ່ຝຸ່ນຂອງເຂົ້າບົກພື້ນເມືອງແມ່ນຕ່ຳ ຫຼື ບໍ່ເປັນເສດຖະກິດ.




ຮູບທີ່ 1. ຜົນຜະລິດໃນດິນປ່າເລົ່າທີ່ແຕກຕ່າງກັນ.

## ພື້ນທີ່ແນະນຳປູກ

ເຂດພາກເໜືອ ແລະ ພາກໃຕ້ ເຊັ່ນ: ແຂວງຫຼວງພະບາງ, ແຂວງໄຊຍະບູລີ, ແຂວງອຸດົມໄຊ, ແຂວງຫຼວງນ້ຳທາ, ແຂວງບໍ່ແກ້ວ, ແຂວງຊຽງຂວາງ, ແຂວງຫົວພັນ ແລະ ແຂວງອັດຕະປື.

## ຄວນລະວັງ

- ບໍ່ທົນທານພະຍາດຈຸດສີນ້ຳຕານ (Brown spot)
- ບໍ່ຄວນປູກໃນພື້ນທີ່ປູກເຂົ້າຕໍ່ເນື່ອງກັນເປັນເວລາ 2-3 ປີ ຜົນຜະລິດຈະຫຼຸດລົງ
- ບໍ່ທົນທານຕໍ່ແມງໄຂ່ປາ (Root aphid)


**ຂໍ້ມູນເພີ່ມເຕີມ**

**ໂດຍ:**

**ທ ຄຳດອກ ຊົງຢີຕັງຊືທໍ່**

ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ

ແຂວງຫຼວງພະບາງ

ຕູ້ ປ.ນ: 467

ໂທ: (856-71) 212099

ແຟກ: (856-71) 212467

email: NAFReC@nafri.org.la



**ກະຊວງກະສິກຳ ແລະ ປ່າໄມ້**

**ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ**

**ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ**


# ເຂົ້າ ນົກ



**ພະຈິກ, 2009**

## ປະຫວັດຄວາມເປັນມາ

ແນວພັນເຂົ້ານົກ (LG-6499) ແມ່ນແນວພັນເຂົ້າບົກພື້ນເມືອງຂອງທ້ອງຖິ່ນ ເມືອງປາກອູ, ແຂວງຫຼວງພະບາງ, ເຊິ່ງໃນປີ 1995 ຫາ 2000 ໂຄງການອະນຸຮັກເຊື້ອພັນ ເຂົ້າ (Lao-IRRI Biodiversity project) ໄດ້ເຕົ້າໂຮມແນວພັນເຂົ້າໃນທົ່ວປະເທດໄດ້ 13.193 ຕົວຢ່າງ, ໃນນັ້ນມີແນວພັນເຂົ້າບົກ 7.300 ຕົວຢ່າງ ໄດ້ນຳມາເກັບມ້ຽນ ແລະ ຮັກສາໄວ້ໃນທະນາຄານເຊື້ອພັນເຂົ້າລາວ. ປີ 1998 ໄດ້ນຳມາສຶກສາ ແລະ ຄັດເລືອກ ທີ່ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ. ປີ 2001 ໄດ້ນຳໄປປູກທົດລອງໃນພື້ນທີ່ຂອງຊາວກະສິກອນ ໃນ 3 ແຂວງພາກເໜືອຄື: ຫຼວງພະບາງ, ອຸດົມໄຊ ແລະ ຫຼວງນ້ຳທາ. ປີ 2002 ໄດ້ນຳໄປທົດລອງ ການຄັດເລືອກແບບມີສ່ວນຮ່ວມຂອງຊາວກະສິກອນໃນ 8 ແຂວງ ພາກເໜືອ, ຜ່ານຈາກການທົດລອງເຫັນວ່າ ສາມາດປັບຕົວໄດ້ດີ ແລະ ເປັນທີ່ຍອມຮັບຂອງຊາວກະສິກອນ

## ລັກສະນະປະຈຳພັນ

- ເປັນປະເພດເຂົ້າໜຽວມີຄວາມຮູ້ສຶກຕໍ່ຊ່ວງແສງ, ອາຍຸ 125–130 ວັນ.
- ຊ່ວງປູກ ທ້າຍເດືອນ ເມສາ (4) - ຕົ້ນເດືອນ ມິຖຸ (6) ຊ່ວງໄລຍະຝົນຕົກ.




- ລຳຕົ້ນສູງປະມານ 100 – 125 ຊຕມ, ລຳຕົ້ນແຂງ, ສີເຫຼືອງ.
- ໃບເປັນສີຂຽວ, ແຜ່ນໃບບໍ່ມີຂົນ, ໃບກ້ວາງ.
- ເມັດເຂົ້າເປືອກກ້ຽງ (ບໍ່ມີຂົນ) ເປັນສີເຫຼືອງຂີດສີດຳ.
- ເມັດໃຫຍ່, ຍາວ 9.60 ມມ, ກ້ວາງ 4.05 ມມ.
- ເມັດເຂົ້າກ້ອງ ຍາວ 5.7 ມມ, ກ້ວາງ 3.1 ມມ.
- ຄຸນນະພາບການກິນດີ, ອ່ອນ, ຫອມ, ເມັດເຂົ້າສານສີຂາວ, ປະລິມານອາມີໂລດ (7.0%)
- ນ້ຳໜັກ 1000 ເມັດ 39 ກຣາມ.




## ລັກສະນະເດັ່ນ

- ຜົນຜະລິດສູງກ່ວາແນວພັນພື້ນເມືອງ 300 ຫາ 500 ກິໂລ.
- ເຫດຜົນຊາວກະສິກອນມັກ: ເມັດໃຫຍ່, ຮວງໃຫຍ່, ລຳຕົ້ນໜາ, ໃຫ້ຜົນຜະລິດດີ.
- ສາມາດປູກໄດ້ໃນລະດັບຄວາມສູງຈາກໜ້ານ້ຳ ທະເລ 300 – 1000 ແມັດ.

